ຂ່າວ NEWS
ທະນາຄານແຫ່ງ ສປປ ລາວ
BANK OF THE LAO PDR
ໜ່ວຍງານຂ່າວສານ ພະແນກສັງລວມ ຫ້ອງການ ທຫລ
ໂທ /ແຟັກ ( 856-21) 260283

# ຜົນສຳເລັດກອງປະຊຸມໃຫຍ່ຄັ້ງທີ່ IV ຂອງສະຫະພັນແມ່ຍິງຮາກຖານ ສາຂາທະນາຄານແຫ່ງ ສປປລາວ ພາກເໜືອ ແຂວງອຸດົມໄຊ



ກອງປະຊຸມໃຫ່ຍຄັ້ງທີ່ IV ຂອງສະຫະພັນແມ່ຍິງຮາກຖານ ສາຂາທະນາຄານແຫ່ງ ສປປ ລາວ ພາກເໜືອ ແຂວງອຸດົມໄຊ ໄດ້ໄຂຂຶ້ນໃນວັນທີ 5 ກໍລະກົດ 2019 ນີ້ພາຍໃຕ້ການເປັນປະທານຂອງ ທ່ານ ນາງ ມອນມະນີ ບຸດສະດີ ປະທານສະຫະພັນແມ່ຍິງຮາກຖານ ສາຂາທະນາຄານແຫ່ງ ສປປລາວ ພາກເໜືອ ແຂວງອຸດົມໄຊ, ໃຫ້ກຽດເຂົ້າຮ່ວມ ມີ ທ່ານ ນາງ ບົວທອງ ວັນນະລາດ ຮອງປະທານສະຫະພັນແມ່ຍິງແຂວງອຸດົມໄຊ, ທ່ານ ນາງ ຄຳຫຼ້າ ສຸລິຍານົນ ຄະນະໜ່ວຍພັກ ຮອງຫົວໜ້າສາຂາທະນາຄານແຫ່ງ ສປປລາວ ພາກເໜືອ ແຂວງອຸດົມໄຊ, ມີບັນດາແຂກທີ່ຖືກເຊີນຈາກບັນດາສະຫະພັນແມ່ຍິງຮາກຖານທະນາຄານການຄ້າຕ່າງເທດລາວມະຫາຊົນ, ທະນາຄານສົ່ງເສີມກະສິກຳ, ສະຫະພັນແມ່ຍິງໜ່ວຍທະນາຄານນະໂຍບາຍ, ທະນາຄານພັດທະນາລາວ, ທະນາຄານລາວຫວຽດ, ສະຖາບັນການເງິນຈຸລະພາກໄຊນິຍົມ , ສະຖາບັນການເງິນຈຸລະພາກພັດທະນາອຸດົມໄຊ ແລະ ສະຫະພັນແມ່ຍິງພະແນກຍຸດຕິທຳ, ສະຫະພັນແມ່ຍິງພະແນກການເງິນແຂວງ ແລະ ພ້ອມດ້ວຍຜູ້ແທນສົມບູນ, ສະມາຊິກສະຫະພັນແມ່ຍິງຮາກຖານເຂົ້າຮ່ວມທັງໝົດ 36 ທ່ານ, ຊາຍ 02 ທ່ານ, ມີຜູ້ແທນສົມບູນ 25 ທ່ານ. ກອງປະຊຸມໄດ້ເປີດຂຶ້ນ ແລະ ໄດ້ຮັບຟັງບົດລາຍງານການເມືອງ ທີ່ສະເໜີໂດຍ ທ່ານ ນາງ ມອນມະນີ ບຸດສະດີ ເຊິ່ງໄດ້ຕີລາຄາເຖິງສະພາບການຈັດຕັ້ງປະຕິບັດວຽກງານ ສະຫະພັນແມ່ຍິງຮາກຖານ ສາຂາ ທະນາຄານແຫ່ງ ສປປລາວ ພາກເໜືອ ແຂວງອຸດົມໄຊ ໃນໄລຍະ 5 ປີຜ່ານມາ ໂດຍຄະນະຮາກຖານໄດ້ເອົາໃຈໃສ່ຊີ້ນຳ-ນຳພາເຄື່ອນໄຫວວຽກງານສະຫະພັນແມ່ຍິງ ໂດຍຕິດພັນກັບວຽກງານວິຊາສະເພາະ ເຊິ່ງໄດ້ພ້ອມກັນຈັດຕັ້ງຜັນຂະຫຍາຍປະຕິບັດມະຕິກອງປະຊຸມໃຫ່ຍຄັ້ງທີ່ III ຂັ້ນຂອງຕົນ ນອກນັ້ນຍັງຄຽງຄູ່ກັບຂໍ້ສະດວກຂໍ້ຫຍຸ້ງຍາກ ແລະ ບົດຮຽນທີ່ຖອດຖອນໄດ້ ເຊິ່ງໄດ້ສະແດງອອກໃຫ້ເຫັນວ່າມີບຸກຄົນດີເດັ່ນໄດ້ຮັບການຍ້ອງຍໍຂອງປະທານສະຫະພັນແມ່ຍິງແຂວງໄລຍະ 5ປີ(2014-2019) ຈຳນວນ 25 ທ່ານ, ຮັບໃບຍ້ອງຍໍບຸກຄົນ 3 ດີໄລຍະທີ່ I (ປີ2016-2017) ຈຳນວນ 21 ທ່ານ ແລະ ໄດ້ຮັບໃບຍ້ອງຍໍສະຫະພັນແມ່ຍິງຮາກຖານ 3 ດີ, ເຊິ່ງທັງໝົດນັ້ນເປັນຜົນງານທີ່ຍາດມາໄດ້ໃນໄລຍະ 5 ປີຜ່ານມາ.







ກອງປະຊຸມໄດ້ມອບໃຫ້ຄະນະຮັບຜິດຊອບຫີບບັດຂຶ້ນຜ່ານມາດຖານເງື່ອນໄຂຜູ້ສະໝັກຄັດເລືອກເປັນຄະນະຊຸດໃໝ່ໂດຍມີຜູ້ສະໝັກທັງໝົດ 7 ທ່ານ, ເລືອກເອົາ 5 ທ່ານ, ກອງປະຊຸມຄັ້ງປະຖົມມະລຶກໄດ້ເຫັນດີເປັນເອກະພາບກັນເລືອກເອົາ ນາງ ມອນມະນີ ບຸດສະດີ ເປັນປະທານສະຫະພັນແມ່ຍິງຮາກຖານ ສາຂາ ທະນາຄານແຫ່ງ ສປປລາວ ພາກເໜືອ ແຂວງອຸດົມໄຊຊຸດໃໝ່, ນາງ ຄໍາແພງ ສຸລິພົນ ເປັນຮອງປະທານທັງເປັນປະທານກວດກາ, ນາງ ສຸພິນດາ ບຸນສະຫວັດ ເປັນຮອງປະທານ, ນາງ ແສງສະຫຼີ ຈອມຄໍາ ແລະ ນາງ ລັດດາວອນ ເທບພະວົງ ເປັນຄະນະ.

ໃນຕອນທ້າຍກອງປະຊຸມຍັງໄດ້ຮັບຟັງການໂອ້ລົມຂອງ ທ່ານ ນາງ ບົວທອງ ວັນນະລາດ ຮອງປະທານສະຫະພັນແມ່ຍິງແຂວງອຸດົມໄຊ ເຊິ່ງທ່ານໄດ້ສະແດງຄວາມຍ້ອງຍໍຊົມເຊີຍຕໍ່ຜົນງານທີ່ທາງຄະນະຊຸດເກົ່າຍາດມາໄດ້ໃນໄລຍະ 5 ປີຜ່ານມາ ພ້ອມດຽວກັນນັ້ນກໍ່ໄດ້ຍົກໃຫ້ເຫັນພາລະບົດບາດຄວາມສໍາຄັນຂອງສະຫະພັນແມ່ຍິງ ແລະ ໃຫ້ທິດຊີ້ນໍາເນັ້ນໜັກໃຫ້ຄະນະປະທານສະຫະພັນແມ່ຍິງຮາກຖານຊຸດໃໝ່ ໃຫ້ເພີ່ມການເອົາໃຈໃສ່ສຶກສາອົບຮົມການເມືອງແນວຄິດໃຫ້ບັນດາສະມາຊິກເອື້ອຍນ້ອງແມ່ຍິງໃຫ້ເລິກເຊິ່ງ ແລະ ໜັກແໜ້ນ, ເພີ່ມການເອົາໃຈໃສ່ສຸມສະຕິປັນຍາ ແລະ ພ້ອມພຽງຮຽງໜ້າກັນໃນການປະຕິບັດຕາມເນື້ອໃນຈິດໃຈຂອງກອງປະຊຸມໃຫ້ປະກົດຜົນເປັນຈິງ, ເພີ່ມການສຶກສາອົບຮົມແນວຄິດ-ຈິດໃຈໃຫ້ແກ່ລູກຫຼານຮູ້ຈັກຮັກສາມູນເຊື້ອວັດທະນາທໍາອັນດີງາມຂອງຊາດ, ປັບປຸງແບບແຜນວິທີເຮັດວຽກໃຫ້ມີຄວາມສອດຄ່ອງ ແລະ ແທດເໝາະກັບສະພາບຄວາມເປັນຈິງ ແລະ ເພີ່ມຄວາມສາມັກຄີພາຍໃນ ພາຍນອກໃຫ້ແໜ້ນແຟ້ນກວ່າເກົ່າ ແລະ ຕ້ອງເປັນເຈົ້າການປົກປ້ອງສິດຜົນປະໂຫຍດຂອງແມ່ຍິງ ແລະ ເດັກນ້ອຍ.

**# ຂ່າວໂດຍ: ມອນມະນີ ບຸດສະດີ**

**# ພາບໂດຍ: ສອນລະເກດ ພິລາສັກ**